California
Deaf-Blind
Services
ໜ່ວຍບໍລິການ
ຜູ້ພິການທັງຫູແລະຕາ
ແຫ່ງຣັຖຄາລີຟໍນີ

ພາຍໃນຣັຖຄາລີຟໍນີ (800) 822-7884

# ຄຳແຈ້ງຂໍ້ມູນຕ່າງ ໆ

# ການຕິດຕໍ່ສື່ສານ :

*ມັນພະຍາຍາມບອກອີ່ຫຍັງກັບຂ້ອຍກໍບໍ່ຮູ້*

ນັກຮຽນບາງຄົນທີ່ພິການທັງຫູທັງຕາ ບໍ່ສາມາດສະແດງສິ່ງບາງຢ່າງຫຣືທຸກຢ່າງກໍໄດ້ ເຊິ່ງຕົນຢາກບອກໃຫ້ຄົນອື່ນເຂົ້າໃຈ ບໍ່ວ່າຈະເປັນດ້ວຍຄຳເວົ້າ, ພາສາໃບ້, ພາສາສັນຍານ, ການໃຊ້ມືທຳຕົວອັກສອນ, ການຂຽນໜັງສື ຫຣືການຊີ້ໄມ້ຊີ້ມືກໍຕາມ. ເມື່ອນັກຮຽນດັ່ງກ່າວບໍ່ສາມາດອະທິບາຍເຖິງຄວາມຄິດຂອງຕົນໄດ້ ໂດຍໃຊ້ວິທີທັມມະດາເຫລົ່ານັ້ນ, ເຂົາເຈົ້າມັກຈະເລືອກໃຊ້ວິທີອື່ນເພື່ອສະແດງສິ່ງເຫລົ່ານັ້ນ. ເຂົາເຈົ້າມັກຈະເລືອກວິທີທີ່ງ່າຍທີ່ສຸດ ເພື່ອທີ່ຈະໃຫ້ຄົນອື່ນເຂົ້າໃຈ. ການສະແດງອອກນີ້ ແມ່ນການຕິດຕໍ່ສື່ສານ. ນັກຮຽນຜູ້ນັ້ນ ມັກຈະທຳການສື່ສານດ້ວຍສີໜ້າ, ການເໜັງຕີງຂອງຮ່າງກາຍ, ການທຳທ່າທາງ, ການຮ້ອງສຽງດັງ ຫຣືການໃຊ້ອາຣົມຢ່າງຮ້າຍແຮງ ເປັນຕົ້ນ. ການໂຕ້ຕອບເຫລົ່ານັ້ນ ພໍ່ແມ່ຂອງນັກຮຽນນັ້ນ ແລະ/ຫຣືຜູ້ປະກອບອາຊີບທີ່ກ່ຽວຂ້ອງ ມັກຈະຮູ້ສຶກວ່າ ແມ່ນການປະພຶດຕົນທີ່ຈຳເປັນຕ້ອງກຳຈັດບໍ່ໃຫ້ກະທຳ, ແຕ່ທີ່ຈິງແລ້ວ ນັກຮຽນຜູ້ນັ້ນພຽງແຕ່ພະຍາຍາມທີ່ຈະທຳການສື່ສານ ຈຶ່ງເກີດຜິດຫວັງຫລາຍຍິ່ງຂຶ້ນເປັນອັນດັບ ຍ້ອນຄົນອື່ນບໍ່ເຂົ້າໃຈສິ່ງທີ່ຕົນກຳລັງສື່ສານຢູ່. ຖ້າ ແທນທີ່ຈະທຳເຊັ່ນນັ້ນ, ເຮົາສາມາດຮັບຮູ້ແລະສົ່ງເສີມຄວາມພະຍາຍາມຂອງນັກຮຽນທີ່ຈະສື່ສານກັບເຮົາໄດ້, ຄວາມປະພຶດທີ່ທຳໃຫ້ເກີດບັນຫານັ້ນ ອາດເຣີ່ມລົດລົງໄດ້.

*ຂໍ້ຄວນຈຳຈື່ໄວ້*

1. ຄວນຖືວ່າການປະພຶດທຸກແນວຂອງນັກຮຽນ ແມ່ນການພະຍາຍາມທີ່ຈະສື່ສານກັບເຮົາ.
2. ຄວນເບິ່ງໃຫ້ດີວ່າ ບັນຫາທາງດ້ານສຸຂະພາບທຸກຢ່າງໄດ້ຮັບການແກ້ໄຂຢ່າງສິ້ນເຊີງຮຽບຮ້ອຍແລ້ວ.
3. ຄວນພະຍາຍາມເຂົ້າໃຈໃນການອຸດສ່າພະຍາຍາມຂອງນັກຮຽນທີ່ຈະທຳການສື່ສານ.
4. ຄວນສອນນັກຮຽນໃຫ້ຮູ້ຈັກວິທີທີ່ເໝາະສົມກວ່າສຳຫຣັບການອອກຄວາມຄິດ, ຫລັງຈາກທ່ານໄດ້ສະແດງໃຫ້ເຂົາເຫັນວ່າທ່ານເຫັນໃຈກັບເຂົາທີ່ໄດ້ພະຍາຍາມທຳການສື່ສານ.

ຄຳແຈ້ງຂໍ້ມູນຈາກ California Deaf-Blind Services (ໜ່ວຍບໍລິການຜູ້ພິການທັງຫູແລະຕາແຫ່ງຣັຖຄາລີຟໍນີ ຫຣື CDBS) ເຫລົ່ານີ້ ຈັດທຳເພື່ອທີ່ຈະນຳໄປໃຊ້ປະໂຍດໄດ້ທັງໂດຍຄອບຄົວແລະໂດຍຜູ້ປະກອບອາຊີບທີ່ຮັບໃຊ້ບໍລິການຜູ້ທີ່ພິການທັງຫູທັງຕາ. ຂໍ້ມູນດັ່ງກ່າວໃຊ້ໄດ້ກັບນັກສຶກສາຕັ້ງແຕ່ເກີດມາຈົນເຖິງໄດ້ຄົບອາຍຸ 22 ປີບໍຣິບູນ. ວັຕຖຸປະສົງຂອງຄຳແຈ້ງຂໍ້ມູນແຕ່ລະສະບັບ ແມ່ນໃຫ້ຄວາມຮູ້ໂດຍທົ່ວໄປໃນເຣື່ອງໃດເຣື່ອງນຶ່ງຢ່າງເຈາະຈົງ. ນັກສຶກສາແຕ່ລະທ່ານ ສາມາດຂໍທາບລາຍລະອຽດເພີ່ມເຕີມໄດ້ໂດຍຜ່ານການຊ່ວຍເຫລືອທາງວິທຍາການສະເພາະລາຍທີ່ໃຫ້ໂດຍ CDBS. ຄຳແຈ້ງຂໍ້ມູນນີ້ ຈຶ່ງນັບເປັນຈຸດເຣີ່ມຕົ້ນສຳຫຣັບການໄດ້ຮັບຊາບລາຍລະອຽດຕໍ່ໄປ.